ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**************

ກະຊວງການເງິນ

ເລກທີ 0765 - /ກງ

ນະຄອນຫຼວງວຽງຈັນ, ວັນທີ 04 JUL 2013

## ຄຳສັ່ງແນະນຳ

ເຖິງ : ບັນດາກົມອ້ອມຂ້າງກະຊວງການເງິນ, ຂະແໜງການລັດທີ່ກ່ຽວຂ້ອງ ແລະ ຜູ້ປະກອບການ.

ເລື່ອງ: ເອົາໃຈໃສ່ຄຸ້ມຄອງການສົ່ງອອກໄມ້ ເພື່ອເກັບລາຍຮັບເຂົ້າງົບປະມານຢ່າງຖືກຕ້ອງ, ຄົບຖ້ວນ, ທັນເວລາ.

- ອີງຕາມກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ ລົງວັນທີ 20/12/2011.
- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ, ສະບັບເລກທີ 17/ນຍ, ລົງວັນທີ 22/09/2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້,
- ອີງຕາມ ມະຕິຕົກລົງຂອງສະພາລັດຖະມົນຕີ, ສະບັບເລກທີ 47/ປສລ, ລົງວັນທີ 26/06/1989 ວ່າດ້ວຍລະບອບພາສີອາກອນຂອງລັດ.

ໃນໄລຍະຜ່ານມາລັດຖະບານ ກໍ່ຄືກະຊວງການເງິນໄດ້ອອກລະບຽບການເພື່ອກຳນົດຂັ້ນຕອນການກວດກາຄຸ້ມຄອງໄມ້ສົ່ງອອກ ຈຳນວນໜຶ່ງ, ແຕ່ການຈັດຕັ້ງປະຕິບັດຕົວຈິງ ຍັງມີຊ່ອງຫວ່າງ ແລະ ບໍ່ທັນເຂັ້ມງວດເທົ່າທີ່ຄວນ; ເພື່ອເພີ່ມທະວີການຄຸ້ມຄອງຊັບພະຍາກອນປ່າໄມ້ຂອງຊາດ ແລະ ຈັດເກັບລາຍຮັບເຂົ້າງົບປະມານ ໃຫ້ໄດ້ຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

### ລັດຖະມົນຕີວ່າການກະຊວງການເງິນ ອອກຄຳສັ່ງແນະນຳດັ່ງນີ້:

1. ການກວດກາໄມ້ຂົ້ນລົດບັນທຸກ ຢູ່ຕົ້ນທາງ, ເປັນຕົ້ນ ຢູ່ສະໜາມ II, ໂຮງງານປຸງແຕ່ງໄມ້ ແລະ ອື່ນໆ ມອບໃຫ້ເຈົ້າໜ້າທີ່ຂະແໜງຊັບສິນຂອງລັດ ເປັນເຈົ້າການສົມທົບກັບຂະແໜງການລັດທີ່ກ່ຽວຂ້ອງ ເພື່ອດຳເນີນການກວດກາ ໃຫ້ຖືກຕ້ອງຄົບຖ້ວນ ຕາມຊະນິດ, ປະເພດ ແລະ ຈຳນວນໄມ້ ທີ່ໄດ້ຮັບອະນຸຍາດສົ່ງອອກ; ພາຍຫລັງສຳເລັດການກວດກາ ຕ້ອງໄດ້ເຮັດບົດບັນທຶກການກວດກາ, ປົກຜ້າບັດ ແລະ ໜີບກົ່ວ ເພື່ອປ້ອງກັນບໍ່ໃຫ້ມີການລັກລອບ ໃນເວລາເຄື່ອນຍ້າຍຕາມເສັ້ນທາງ ໄປຫາດ່ານຊາຍແດນບ່ອນສົ່ງອອກ.

   ການສົ່ງອອກໄມ້ທຸກປະເພດ ຕ້ອງໄດ້ມອບພັນທະ ຕໍ່ຂະແໜງຊັບສິນຂອງລັດ ແລະ ຂະແໜງສ່ວຍສາອາກອນ ຕາມລະບຽບການ ຢ່າງຖືກຕ້ອງ ແລະ ຄົບຖ້ວນ. ການສົ່ງອອກໄມ້ດັ່ງກ່າວ ອະນຸຍາດໃຫ້ສົ່ງອອກໄດ້ສະເພາະຢູ່ດ່ານສາກົນ ເທົ່ານັ້ນ.

2. ການສົ່ງອອກໄມ້ແປຮູບ, ໄມ້ທ່ອນ, ຕໍໄມ້, ປູດໄມ້ ແລະ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ຕ້ອງໃຫ້ສອດຄ່ອງກັບຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ, ລົງວັນທີ 22/09/2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະ

ໄມ້ແລະຕ້ອງເສຍຄ່າຊັກພິເສດຂາອອກ 30% ຂອງມູນຄ່າໄມ້ທີ່ກະຊວງອຸດສະຫະກຳ-ການຄ້າ ໄດ້ກຳນົດອອກໃນແຕ່ລະໄລຍະ.

3. ການຊື້ຂາຍໄມ້ ເພື່ອສົ່ງອອກໄປຕ່າງປະເທດ, ຜູ້ສົ່ງອອກ ຕ້ອງມີສັນຍາຊື້ຂາຍກັບບໍລິສັດຢູ່ຕ່າງປະເທດ ແລະ ຕ້ອງຊຳລະສະສາງຜ່ານລະບົບທະນາຄານຂອງ ສປປ ລາວ ຖ້າບໍ່ໄດ້ຕາມເງື່ອນໄຂດັ່ງກ່າວ ບໍ່ອະນຸຍາດໃຫ້ສົ່ງໄມ້ອອກຢ່າງເດັດຂາດ.

4. ມອບໃຫ້ເຈົ້າໜ້າທີ່ພາສີປະຈຳຢູ່ດ່ານພາສີຊາຍແດນເປັນເຈົ້າການດຳເນີນການກວດກາລົດບັນທຸກໄມ້ແຕ່ລະຄັນຢ່າງລະອຽດແລະເຂັ້ມງວດຫາກພົບເຫັນການລັກລອບຊຸກເຊື່ອງໄມ້ໜີພາສີ ໃຫ້ດຳເນີນການປັບໄໝຕາມກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ20 ທັນວາ 2011 ພ້ອມທັງຮິບໄມ້ຈຳນວນດັ່ງກ່າວເປັນຂອງລັດຕາມລະບຽບກົດໝາຍ.

5. ຫ້າມເຈົ້າໜ້າທີ່ຂະແໜງການເງິນ ສົມຮູ້ຮ່ວມຄິດກັບຜູ້ປະກອບການຫຼືລະເລີຍການປະຕິບັດໜ້າທີ່ ເຮັດໃຫ້ເກີດມີການລັກລອບສົ່ງໄມ້ອອກຖ້າຜູ້ໃດລະເມີດຕ້ອງຖືກປະຕິບັດວິໄນຕາມລະບຽບການລັດຖະກອນແລະກົດໝາຍ ຢ່າງເຂັ້ມງວດ;ສ່ວນຜູ້ປະກອບການຕ້ອງຖືກດຳເນີນຄະດີຕາມກົດໝາຍ.

6. ສຳລັບລາຍຮັບທີ່ໄດ້ຈາກການປະມູນຂາຍໄມ້ທີ່ເປັນຄະດີຂອງພາສີ ແມ່ນມອບໃຫ້ເປັນລາຍຮັບຂອງຂະແໜງພາສີ.

7. ຄຳສັ່ງແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ,ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງການເງິນ

ພູເພັດ ຄຳພູນວົງ

ບ່ອນສົ່ງ:

| | | |
|---|---|---|
| - | ທ່ານນາຍົກ ແລະຮອງນາຍົກລັດຖະມົນຕີ, ທ່ານລະ 1 ສະບັບ | 05 ສະບັບ |
| - | ຫ້ອງວ່າການສູນກາງພັກ | 01 ສະບັບ |
| - | ຫ້ອງວ່າການລັດຖະບານ | 01 ສະບັບ |
| - | ກະຊວງອຸດສາຫະກຳ ແລະການຄ້າ | 01 ສະບັບ |
| - | ກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ | 01 ສະບັບ |
| - | ກະຊວງກະສິກຳ ແລະປ່າໄມ້ | 01 ສະບັບ |
| - | ບັນດາແຂວງແລະນະຄອນຫລວງ, ແຂວງລະ 1 ສະບັບ, | 18 ສະບັບ |
| - | ພະແນກການເງິນປະຈຳແຂວງ,ນະຄອນຫລວງ, ແຂວງລະ 1 ສະບັບ | 18 ສະບັບ |
| - | ບັນດາກົມອ້ອມຂ້າງກະຊວງການເງິນ , ກົມລະ 1 ສະບັບ | 14ສະບັບ |
| - | ສະພາອຸດສາຫະກຳ ແລະການຄ້າ | 01 ສະບັບ |